## ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດທີ 14 ມິຖຸນາ 2020 (06-14-2020)**

---

## ການສະແດງອອກຂອງຄວາມຫວັງຂອງພວກເຮົາ.

| ເມື່ອໃດທີ່ທ່ານຖືກຫຼອກລວງໂດຍບາງສິ່ງທີ່ບໍ່ເປັນສົມດັ່ງຄວາມໂຄສະນາ? |
| --- |

**ຈຸດສຳຄັນໃນບົດຮຽນ:** ຄວາມຫວັງຂອງພວກເຮົາໃນອົງພຣະຄຣິດ ປ່ຽນແປງວິທີທີ່ພວກເຮົາມອງເບິ່ງໂລກ ແລະ ດຳຣົງຊີວິດຢູ່ໃນໂລກນີ້.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ການສໍ້ໂກງ.ການຫຼອກລວງ. ການກະທຳຜິດ(ສິນທັມຫຼືກົດໝາຍ). ຫຼາຍລ້ານໂດລາໄດ້ຈ່າຍໃຫ້ແກ່ພະນັກງານບໍຣິຫານວິທຍາລັຍ(ຈ້າງເຂົ້າ) ເປັນຂ່າວອື້ສາວຮັບສິນບົນໃນປີ2019. ກໍລະນີທີ່ສົນໃຈຫຼາຍເປັນຕົ້ນຜູ້ມີຊື່ສຽງ, ນັກກິລາ, ໂຄຈຝຶກຊ້ອມ, ຜູ້ໃຫ້ຄຳປຶກສາ, ແລະນັກອາຊີບຕ່າງໆ ລ້ວນຢູ່ໃນກໍລະນີນີ້ທັງນັ້ນ.

ຢູ່ລຸ່ມສຸດຂອງສິ່ງເຫຼົ່ານີ້ແມ່ນຄວາມຫວັງທີ່ບໍ່ຖືກຕ້ອງ: ຜິດພາດໃນມະຫາວິທະຍາລັຍ, ລະດັບ, ທີມ, ຫຼື ຍົດສັກ. ສິ່ງທັງໝົດເຫຼົ່ານີ້ສາມາດພັງທະລາຍລົງ. ແຕ່ມັນບໍ່ຈຳເປັນຕ້ອງເປັນຂ່າວອື້ສາວໂດ່ງດັງທີ່ສະແດງໃຫ້ເຫັນຄວາມຫວັງທີ່ຖືກທາຍໄປ (ຫຼືເຮັດເຮັ່ງ) ພວກເຮົາເຄີຍໄດ້ເຫັນເມື່ອຄົນຕິດຕາມຄວາມຫວັງທີ່ຈະມີບ້ານຫຼັງໃຫຍ່ໂຕ, ວຽກງານທີ່ດີກວ່າ, ຫຼືຍົດຖາບັນດາສັກຄ້າຍຄືກັບວ່າສິ່ງເຫຼົ່ານີ້ສຳຄັນຫຼາຍແທ້ໆ! ຄວາມເຊື່ອແລະຄວາມຫວັງໃນພຣະຄຣິດປ່ຽນມຸມມອງຂອງພວກເຮົາເພື່ອວ່າຊີວິດຈະບໍ່ແມ່ນສິ່ງທີ່ພວກເຮົາສາມາດໄດ້ຮັບອີກຕໍ່ໄປ, ແຕ່ຊີວິດແມ່ນກ່ຽວກັບວິທີທີ່ພວກເຮົາສະແດງຄວາມຮັກ ແລະ ວິທີທີ່ພວກເຮົາຮັບໃຊ້ອົງພຣະເຈົ້າແລະ ຮັບໃຊ້ຄົນອື່ນ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

### 1. 1 ເປໂຕ1:13-16

*13 ເຫດສັນນັ້ນຈົ່ງຕຽມຕົວຕຽມໃຈຂອງພວກທ່ານໃຫ້ດີຈົ່ງມີສະຕິລະວັງຕົວແລະຈົ່ງຕັ້ງຄວາມຫວັງໃຫ້ເຕັມບໍຣິບູນໃນ*
*ພຣະຄຸນຄືພຣະຄຸນຊຶ່ງຈະຊົງໂຜດປະທານແກ່ພວກທ່ານເມື່ອພຣະເຢຊູຈະສະເດັດມາປະກົດ. 14 ໂດຍທີ່ພວກທ່ານ*
*ເປັນລູກທີ່ຟັງຄວາມຢ່າໄດ້ດຳເນີນຊີວິດຕາມກິເລດຕັນຫາແບບເກົ່າຢ່າງເມື່ອພວກທ່ານຍັງໂງ່ຢູ່. 15 ແຕ່ເພາະພຣະ-*
*ອົງຜູ້ຊົງເອີ້ນທ່ານທັງຫລາຍນັ້ນບໍຣິສຸດ.ຝ່າຍພວກທ່ານ, ຈົ່ງກາຍເປັນຜູ້ບໍຣິສຸດໃນກິຣິຍາວາຈາທຸກປະການເໝືອນ*
*ກັນ. 16 ເພາະມີຄຳຊຽນໄວ້ແລ້ວວ່າ: "ເຈົ້າທັງຫລາຍຈົ່ງເປັນບໍຣິສຸດເພາະຝ່າຍເຮົາບໍຣິສຸດ."*

ໃນພາກແລ້ວນີ້, ພວກເຮົາໄດ້ອ່ານຄຳເວົ້າຂອງເປໂຕກ່ຽວກັບ"*ພວກເຮົາແມ່ນໃຜໃນອົງພຣະຄຣິດ?*" ບັດນີ້ເປໂຕຮຽກຮ້ອງໃຫ້ພວກເຮົາປະຕິບັດ. ບັນດາຜູ້ທີ່ໄດ້ຮັບຈົດໝາຍຂອງເປໂຕຄັ້ງແຮກໄດ້ຖືກຜະເຊີນໜ້າກັບການຂົ່ມເຫງ, ແຕ່ເປໂຕບໍ່ໄດ້ຮຽກຮ້ອງໃຫ້ພວກເພິ່ນຈັບອາວຸດຍຸດໂທປະກອນເຂົ້າຕໍ່ຕ້ານຈັກກະພັດໂຣມັນ. ກົງກັນຂ້າມ, ເປໂຕເຂົ້າໃຈວ່າພວກເຮົາສູ້ຮົບກັບສົງຄາມທີ່ແທ້ຈິງຄື: ຄວາມຮັກຂອງພວກເຮົາ, ເວລາ, ຣະບຽບວິນັຍ, ຄວາມວິຕົກກັງວົນ, ແລະການຈັດລຳດັບຄວາມສຳຄັນ. ພວກເຮົາຕໍ່ສູ້ກັບສົງຄາມຝ່າຍຈິດວິນຍານດ້ວຍການດຳຣົງຊີວິດຕາມມາດຕະຖານ

ຂອງພຣະເຈົ້າແຫ່ງຄວາມສັກສິດແລະຄວາມບໍຣິສຸດ ໂດຍຜ່ານພຣະອຳນາດຂອງພຣະວິນຍານບໍຣິສຸດ. ເມື່ອຈິດໃຈຂອງພວກເຮົາໝົດໄປກັບຂອງປະທານທີ່ພວກເຮົາໄດ້ຮັບແລະພວກເຮົາລືມພຣະອົງຜູ້ຊົງປະທານ, ພວກເຮົາກໍ່ຂາດຄວາມສົມດູນ (ກ້ຳເກິ່ງ); ຈາກນັ້ນພວກເຮົາຈຳເປັນຕ້ອງຕັ້ງຈິດຕັ້ງໃຈຂອງພວກເຮົາໃໝ່ໃຫ້ມັນສອດຄ່ອງກັບຄວາມຫວັງທີ່ພວກເຮົາມີໃນພຣະຄຣິດ. ເປໂຕໄດ້ໃຫ້ຄຳແນະນຳ 5 ຂໍ້ເພື່ອຊ່ວຍພວກເຮົາໃຫ້ສອດຄ່ອງກັບຄວາມຫວັງນັ້ນ:

- **ຈົ່ງຕຽມພ້ອມ.** ("ເມື່ອຈິດໃຈຂອງທ່ານພ້ອມທີ່ຈະປະຕິບັດ") ພວກເຮົາສົມຄວນທີ່ຈະຕ້ອງຕຽມພ້ອມໃນດ້ານຈິດໃຈຈິດວິນຍານ ສຳລັບການຊົງສະເດັດກັບມາຂອງອົງພຣະຄຣິດ.
- **ຈົ່ງລະວັງ.** ("ມີສະຕິລະວັງຕົວຢູ່ສເມີ") ເປໂຕໄດ້ກ່າວເຖິງອັນຕະລາຍຂອງການປ່ອຍໃຫ້ຈິດໃຈຂອງພວກເຮົາຂຸ່ນມົວໄປ (ດ້ວຍເມກໝອກ) ໂດຍການຫຼອກລວງຫຼືໂດຍຄວາມໂລບມາກໂລພາຂອງພວກເຮົາ.
- **ຈົ່ງມີຄວາມຫວັງ.** ("ຕັ້ງຄວາມຫວັງຢ່າງສົມບູນໃນພຣະຄຸນທີ່ຈະຖືກນຳມາສູ່ທ່ານໃນການເປີດເຜີຍຂອງພຣະເຢຊູຄຣິດ") ຄວາມຫວັງນີ້ມີຈຸດປະສົງ; ມັນໄດ້ສຸມໃສ່ພຣະຄຸນຂອງພຣະຄຣິດ.
- **ຈົ່ງແຕກຕ່າງ.**("ຢ່າເຮັດຕາມຄວາມປາຖນາຂອງຄວາມໂງ່ຈ້າໃນອະດີດຂອງເຈົ້າ") ຊີວິດຂອງບັນດາຜູ້ທີ່ເຊື່ອສົມຄວນຈະເປັນວຽກງານຕ້ານວັທນະທັມ(counter-cultural).
- **ຈົ່ງບໍຣິສຸດ.** ("ໃນຖານະເປັນຜູ້ທີ່ເອີ້ນທ່ານວ່າບໍຣິສຸດ, ທ່ານຕ້ອງເປັນຄົນບໍຣິສຸດເໝືອນກັນໃນການປະພຶດທັງໝົດຂອງທ່ານ; ເພາະວ່າມີຄຳຂຽນໄວ້ວ່າ, ຈົ່ງບໍຣິສຸດ, ເພາະວ່າເຮົາບໍຣິສຸດ") ພຣະເຈົ້າຊົງບໍຣິສຸດພຣະອົງຊົງແຍກອອກຈາກສິ່ງອື່ນໆ - ແລະພຣະອົງໄດ້ຊົງເອີ້ນພວກເຮົາໃຫ້ບໍຣິສຸດ. ການເປັນຄົນທີ່ບໍຣິສຸດນັ້ນກໍ່ຄື *ການເປັນເໝືອນພຣະຄຣິດ*.

ຄວາມບໍຣິສຸດ ບັນລະຍາຍຄວາມສັມພັນລະຫວ່າງພຣະເຈົ້າ ແລະ ບັນດາຜູ້ທີ່ພຣະອົງໄດ້ຊົງເລືອກໄວ້ແລ້ວນັ້ນ. ຄວາມບໍຣິສຸດຂອງພຣະເຈົ້າຜະເຊີນໜ້າກັບການບູຊາຮູບໂຄຣົບ ແລະຄວາມຜິດບາບຂອງພວກເຮົາເອງແລະຮຽກເອີ້ນພວກເຮົາໃຫ້ມາສູ່ຄວາມບໍຣິສຸດ.

| |
|---|
| ການດຳເນີນຊີວິດເໝືອນຢ່າງຊາວໂລກນີ້ມີລັກສະນະຄືແນວໃດໃນທຸກວັນນີ້? |

## 2. 1 ເປໂຕ 1:17-21

*[17]ແລະຖ້າພວກທ່ານອ້ອນວອນທູນຂໍຕໍ່ພຣະອົງ ຜູ້ຊົງພິພາກສາທຸກຄົນຕາມກິຈການຂອງເຂົາໂດຍບໍ່ເລືອກໜ້າຜູ້ໃດ. ເຖິງແມ່ນວ່າພວກທ່ານເອີ້ນພຣະອົງວ່າ "ພຣະບິດາ" ກໍຕາມຈົ່ງປະຕິບັດໄປດ້ວຍຄວາມຢຳເກງຕລອດເວລາທີ່ພວກທ່ານອາສັຍຢູ່ໃນໂລກນີ້.[18]ທ່ານທັງຫລາຍຮູ້ແລ້ວວ່າພຣະອົງຊົງໄຖ່ພວກທ່ານອອກຈາກການດຳເນີນຊີວິດອັນບໍ່ມີປໂຍດຊຶ່ງພວກທ່ານໄດ້ຮັບຕໍ່ຈາກບັນພະບຸຣຸດຂອງພວກທ່ານບໍ່ແມ່ນໄຖ່ໄວ້ດ້ວຍສິ່ງຂອງທີ່ເສື່ອມສູນໄປຄືເງິນຫຼືຄຳ.*
*[19]ແຕ່ຊົງໄຖ່ດ້ວຍພຣະໂລຫິດອັນຊົງມີຄ່າຂອງພຣະຄຣິດເໝືອນດັ່ງເລືອດລູກແກະທີ່ບໍ່ມີຕຳໜິຫລືຮອຍດ່າງ. [20]ພຣະເຈົ້າໄດ້ຊົງກຳນົດພຣະຄຣິດນັ້ນໄວ້ກ່ອນຊົງສ້າງໂລກແຕ່ໄດ້ຊົງໃຫ້ພຣະອົງປາກົດໃນເວລາສຸດທ້າຍນີ້ເພື່ອທ່ານທັງຫລາຍ.[21]ເພາະດ້ວຍພຣະຄຣິດນັ້ນພວກທ່ານຈຶ່ງວາງໃຈເຊື່ອໃນພຣະເຈົ້າ, ຜູ້ຊົງບັນດານໃຫ້ພຣະຄຣິດເປັນຄືນມາຈາກຕາຍ, ແລະຊົງປະທານສະງ່າຣາສີໃຫ້ແກ່ພຣະອົງຈົນກວ່າຄວາມເຊື່ອແລະຄວາມຫວັງໃຈຂອງພວກທ່ານຈຶ່ງຕັ້ງຢູ່ໃນພຣະເຈົ້າ.*

ພວກເຮົາໄດ້ເຫັນຄວາມຈິງອັນໜ້າອັສຈັນ 2 ປະການໃນພຣະຄັມພີຊ່ວງນີ້:

- **ພຣະເຈົ້າຊົງເປັນອົງພຣະເຈົ້າທີ່ບໍ່ຊົງລຳອຽງ.** ພຣະເຈົ້າບໍ່ໄດ້ປະທັບໃຈກັບຄວາມຮັ່ງມີ, ການສຶກສາ, ຖານະທາງສັງຄົມ, ຮູບຮ່າງໜ້າຕາ, ຫລືສະຕິປັນຍາ. ພຣະເຈົ້າບໍ່ຊົງປະເມີນມູນຄ່າລາຄາຂອງພວກເຮົາໂດຍອີງ

ໃສ່ພາຍນອກ; ພຣະເຈົ້າຊົງເບິ່ງພາຍໃນ: ຄືຫົວໃຈຂອງພວກເຮົາ.

- **ພຣະເຈົ້າຊົງໄຖ່ພວກເຮົາໂດຍຜ່ານອົງພຣະຄຣິດ.** ຄວາມລອດພົ້ນຂອງພວກເຮົາບໍ່ໄດ້ຖືກຮັບປະກັນໂດຍສິ່ງທີ່ເນົ່າເປື່ອຍເສື່ອມໂຊມ. ຮູບຮ່າງລັກສນະພາຍນອກແລະການສະສົມຊັບສົມບັດຈະຈືດຈາງຫາຍໄປ, ແຕ່ການໄຖ່ຂອງພວກເຮົາແມ່ນປອດພັຍ (ຮັບປະກັນ) ໃນອົງພຣະຄຣິດ.

ການໄຖ່ແມ່ນເປັນຄຳທີ່ອຸດົມສົມບູນທີ່ມີຜົນສະທ້ອນອັນໃຫຍ່ຫຼວງສຳລັບການດຳເນີນຊີວິດຕາມຮອຍພຣະບາດຂອງອົງພຣະຄຣິດ. ພາສາກຣີກຄຳວ່າ "ລຸຕຣູ"(*lutroo)* ມີຄວາມໝາຍວ່າຈະໄດ້ຮັບການປ່ອຍຕົວໂດຍການຈ່າຍລາຄາທີ່ຖືກຮຽກຄ່າໄຖ່. ອົງພຣະເຢຊູໄດ້ຊົງສະເດັດມາໃນໂລກນີ້ເພື່ອໄຖ່ບາບໂດຍພຣະໂລຫິດແລະຊີວິດ (ເປັນຄ່າໄຖ່): "*ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ*" (ຢຮ 3:16). ອົງພຣະເຢຊູໄດ້ຊົງກ່າວໄວ້ວ່າ: "...*ຝ່າຍເຮົາໄດ້ມາເພື່ອເຂົາຈະໄດ້ຊີວິດແລະຈະໄດ້ຢ່າງຄົບບໍຣິບູນ.*" (ຢຮ 10:10).

| |
|---|
| ຫຼັກຖານທີ່ສະແດງໃຫ້ເຫັນວ່າ ອົງພຣະເຢຊູໄດ້ຊົງໄຖ່ຊີວິດຂອງທ່ານໃນແງ່ມູມຕ່າງໆ ນັ້ນແມ່ນຫຍັງ? |

## 3.1 ເປໂຕ 1:22-25

*[22] ທີ່ທ່ານທັງຫລາຍໄດ້ຊຳຣະຈິດໃຈຂອງຕົນໃຫ້ບໍຣິສຸດດ້ວຍຄວາມເຊື່ອຟັງຄວາມຈິງຈົນມີຄວາມຮັກພວກພີ່ນ້ອງຢ່າງຈິງໃຈ, ພວກທ່ານຈົ່ງຮັກເຊິ່ງກັນແລະກັນດ້ວຍເຕັມໃຈ. [23]ດ້ວຍວ່າທ່ານທັງຫລາຍໄດ້ເກີດໃໝ່ແລ້ວບໍ່ແມ່ນເກີດຈາກແນວປູກທີ່ອາດເປື່ອຍເນົ່າແຕ່ເກີດຈາກແນວປູກທີ່ບໍ່ອາດເປື່ອຍເນົ່າຄືເກີດຈາກພຣະທັມຂອງພຣະເຈົ້າອັນຊົງຊີວິດແລະຕັ້ງໝັ້ນຄົງ. [24]ເພາະວ່າ, "ບັນດາມະນຸດທັງໝົດເປັນເໝືອນຕົ້ນຫຍ້າແລະບັນດາສະງ່າຣາສີຂອງເຂົາກໍເປັນເໝືອນດອກຫຍ້າຕົ້ນຫຍ້າກໍຫ່ຽວແຫ້ງໄປ ແລະດອກມັນກໍຫ່ວງຫຼົ່ນໄປ. [25]ແຕ່ພຣະທັມຂອງອົງພຣະຜູ້ເປັນເຈົ້າຕັ້ງໝັ້ນຄົງຢູ່ເປັນນິດ"ພຣະທັມນັ້ນຄືຂ່າວປະເສີດທີ່ໄດ້ປະກາດໃຫ້ພວກທ່ານຊາບແລ້ວ.*

ເປໂຕໄດ້ອະທິບາຍຢ່າງຊັດເຈນວ່າ, ເມື່ອເວົ້າເຖິງເຣື່ອງການດຳຣົງຊີວິດດ້ວຍຄວາມຫວັງແລະຄວາມເຊື່ອໂດຍແມ່ນສິດທິພິເສດທີ່ເປັນຂອງພວກເຮົາໂດຍຜ່ານຊີວິດ, ການສິ້ນພຣະຊົນ, ແລະການຟື້ນຄືນພຣະຊົນຂອງພຣະຄຣິດ, ພຣະຄຳຂອງພຣະເຈົ້າຊົງເປັນຄຳແນະນຳ (ຄູ່ມືຊີວິດ) ຢ່າງດຽວເທົ່ານັ້ນໃນຊີວິດຂອງພວກເຮົາ.

| |
|---|
| ທ່ານໄດ້ມີປະສົບການກ່ຽວກັບພຣະອຳນາດຂອງພຣະຄຳພຣະເຈົ້າໃນການ "ຍັງຄົງຢູ່ຢ່າງບໍຣິສຸດ"ໃນໂລກນີ້ຢ່າງໃດ? |

ພຣະຄຳຂອງພຣະເຈົ້າສະແດງໃຫ້ເຮົາເຫັນວິທີທີ່ຈະຮັກພວກພີ່ນ້ອງຢ່າງຈິງໃຈ (ຂໍ້ 22). ທີ່ຈິງແລ້ວ, ພວກເຮົາບໍ່ສາມາດຮັກໃນທາງນີ້ໄດ້ໂດຍທີ່ບໍ່ຮູ້ພຣະຄຳຂອງພຣະເຈົ້າ. ຕລອດພຣະຄັມພີທຸກໆໜ້າ, ພຣະຄຳຂອງພຣະເຈົ້າໄດ້ຊົງເປີດເຜີຍໃຫ້ພວກເຮົາຮູ້ວ່າຄວາມຮັກແມ່ນຫຍັງ, ພຣະອົງໄດ້ຊົງສຳແດງຄວາມຮັກນັ້ນແກ່ພວກເຮົາຢ່າງໃດ, ແລະວິທີທີ່ພວກເຮົາຈະສະແດງຄວາມຮັກນັ້ນຕໍ່ໂລກທີ່ຢູ່ອ້ອມຮອບພວກເຮົາຢ່າງໃດ? ເປໂຕໄດ້ໃຫ້ຄວາມຈິງທີ່ສຳຄັນ 2 ຢ່າງກ່ຽວກັບພຣະຄຳໃນວັກນີ້:

1. **ພຣະຄຳຂອງພຣະເຈົ້າຊົງມີຊີວິດຢູ່. ຍັງ**ຊົງເປັນຢູ່ ແລະ ຊົງຫ້າວຫັນ. ພຣະຄຳຊົງກຳລັງທຳງານຢູ່ສເມີເພື່ອເຮັດໃຫ້ພຣະປະສົງຂອງອົງພຣະເຈົ້າໄດ້ສຳເຣັດ. ພຣະຄຳບໍ່ໄດ້ຕາຍ, ບໍ່ໄຮ້ຄວາມໝາຍ, ຫຼື ຫຼ້າສມັຍ.

2. **ພຣະຄຳຂອງພຣະເຈົ້າຊົງຍືນຍົງ.** ຫລາຍຄັ້ງ, ຢູ່ໃນພຣະຄັມພີພາກພຣະສັນຍາໃໝ່ພວກເຮົາໄດ້ເຫັນຄຳນີ້ ທີ່ແປວ່າ "ປະຕິບັດຕາມ" ຫຼື "ຍັງຄົງຢູ່". ພຣະຄຳຂອງພຣະເຈົ້າຊົງສະຖິດຢູ່ທີ່ນີ້ເພື່ອຊົງສະຖິດຢູ່ຕລອດໄປ. **ພຣະຄຳຂອງພຣະເຈົ້າຊົງໝັ້ນຄົງແລະບໍ່ປ່ຽນແປງເພາະວ່າພຣະເຈົ້າຜູ້ທີ່ຊົງເປີດພຣະວາທະນັ້ນຊົງໝັ້ນຄົງແລະ <u>ບໍ່ປ່ຽນແປງ</u>.**

| |
|---|
| ແມ່ນຫຍັງເປັນການທ້າທາຍແລະເປັນຜົນປະໂຍດຂອງການຮັກຄົນອື່ນຢ່າງຈິງໃຈ ແລະ ຢ່າງໝັ້ນຄົງສເມີໄປ? |

## ນຳໃຊ້ໃນຊີວິດ:

ທ່ານຈະເອົາຄວາມຈິງຈາກບົດຮຽນວັນນີ້ໄປນຳໃຊ້ໃນຊີວິດຢ່າງໃດ. ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງສາຣະພາບ.** ຈົ່ງສາຣະພາບຕໍ່ພຣະເຈົ້າວ່າທ່ານໄດ້ເຮັດຄວາມຫວັງຂອງທ່ານເສັຽໄວ້ທີ່ໃດ? ຈົ່ງຊື່ສັດແລະຈິງໃຈຕໍ່ຄົນແລະສິ່ງຂອງຊຶ່ງທ່ານໄດ້ຊອກຫາຄວາມຫວັງນອກເໜືອຈາກພຣະຄຣິດ.
- **ຈົ່ງອ່ານ.** ຈົ່ງສັນຍາອ່ານພຣະຄຳພຣະເຈົ້າ ແລະນຳໄປປະຕິບັດໃນການດຳເນີນຊີວິດປະຈຳວັນໃນທຸກໆວັນ. ມັນແມ່ນຜ່ານການອ່ານພຣະຄັມພີຢ່າງຕໍ່ເນື່ອງຢູ່ສເມີນີ້ລະທີ່ພວກເຮົາສາມາດພັດທະນາແບບແຜນການດຳຣົງຊີວິດແຫ່ງການເຊື່ອຟັງແລະການດຳຣົງຊີວິດທີ່ບໍຣິສຸດ.
- **ຈົ່ງສັນຍາ.** ຖ້າຫາກມີພາກສ່ວນໃດໃນຊີວິດຂອງທ່ານທີ່ຄວາມຫວັງຂອງທ່ານໃນອົງພຣະຄຣິດເຫັນໄດ້ບໍ່ຊັດເຈນຜ່ານການເຊື່ອຟັງພຣະເຈົ້າ, ຈົ່ງສັນຍາຕໍ່ຕົນເອງໃຫ້ປ່ຽນແປງສິ່ງນີ້. ຈົ່ງຍອມຈຳນົນພາກສ່ວນຊີວິດນັ້ນຕໍ່ອົງພຣະເຈົ້າ, ແລະຈົ່ງໂຍນຖິ້ມອຸປສັກທັງຫຼາຍເຫຼົ່ານີ້ທີ່ກີດກັ້ນລະຫວ່າງທ່ານແລະການເຊື່ອຟັງທັງໝົດ.

ຝູງຄົນທັງຫຼາຍສ່ວນໃຫຍ່ແມ່ນເຮັດເສັຽ(ຫຼືງບອ່ນໄວ້)ຄວາມຫວັງແລະຄວາມເຊື່ອໄວ້ວາງໃຈ. ພວກເພິ່ນມີໃຈຈົດຈໍ່ໃສ່ໃນສິ່ງເລັກໆນ້ອຍໆ. ແຕ່ຄວາມຫວັງໃນພຣະຄຣິດຢ່າງແທ້ຈິງຈະປ່ຽນແປງວິທີການທີ່ພວກເຮົາມອງເບິ່ງໂລກ ແລະວິທີການທີ່ພວກເຮົາອາສັຍຢູ່ໃນໂລກນີ້ - ເພື່ອສະງ່າຣາສີຂອງພຣະເຈົ້າ. ອາແມນ!

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນhttp://lsbf.us ໂດຍSSK**